| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ການອະນຸຍາດໄປເກັບກຳຂໍ້ມູນແຮ່ທາດ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoEM-GMD-16 | 22.09.2017 | ກົມທໍລະນີສາດ ແລະ ແຮ່ທາດ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄຳຮ້ອງ | ຢູ່ທີ່ຫ້ອງການເຈົ້າໜ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | B - ອຸດສາຫະກຳບໍ່ແຮ່ ແລະ ການຂຸດຄົ້ນ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ການເຂົ້າໄປຍັງພື້ນທີ່ໃດໜຶ່ງ ເພື່ອຈຸດປະສົງໃນການສຳຫລວດ ເກັບກຳຂໍ້ມູນດ້ານແຮ່ທາດ ໂດຍບໍ່ໄດ້ຮັບການອະນຸຍາດ ອາດພາໃຫ້ເກີດຄວາມສ່ຽງ, ຄວາມກັງວົນ ຫລື ສິ່ງລົບກວນໃຫ້ແກ່ ຊຸມຊົນທີ່ອາໄສຢູ່ໃນພື້ນທີ່ດັ່ງກ່າວ, ດັ່ງນັ້ນ ຈຶ່ງຕ້ອງໃຫ້ມີການຂໍອະນຸຍາດກ່ອນ. ນອກຈາກນີ້, ການອອກອະນຸຍາດນີ້ ແມ່ນເພື່ອຈຸດປະສົງໃນການເກັບກຳຂໍ້ມູນພື້ນທີ່ທີ່ມີແນວໂນ້ມ ທີ່ນັກລົງທຶນ ອາດໃຫ້ຄວາມສົນໃຈໃນການລົງທຶນໄດ້ອີກດ້ວຍ. |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ບຸກຄົນ ຫລື ນິຕິບຸກຄົນ ທີ່ມີຈຸດປະສົງຢາກໄປກວດກາ, ເດີນສຳຫລວດຫາຈຸດປະກົດແຮ່ທາດ, ສຶກສາຂໍ້ມູນກ່ຽວກັບຈຸດພິເສດຂອງພື້ນທີ່, ສຶກສາໂຄງສ້າງທາງດ້ານທໍລະນີສາດ ແລະ ການປະກົດຕົວຂອງແຮ່ທາດ ເພື່ອໃຫ້ມີຄວາມໝັ້ນໃຈວ່າ ພື້ນທີ່ເປົ້າໝາຍດັ່ງກ່າວ ຜູ້ທີ່ຈະນຳສະເໜີຂໍສິດສຳປະທານ ເພື່ອການຊອກຄົ້ນ, ສຳຫລວດ ຫລື ພັດທະນາແຮ່ທາດ ໄດ້ຫລືບໍ່ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ບໍ່ມີ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | |
| ມີແບບຟອມໃບຄຳຮ້ອງ ໃບອະນຸຍາດ ຫລືບໍ່? | ບໍ່ມີ |
| ຄຳເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | 1. ຕ້ອງມີວິຊາການລັດໄປເກັບກຳຂໍ້ມູນຮ່ວມກັບ ຜູ້ລົງທຶນ ແລະ ຜູ້ລົງທຶນຕ້ອງຮັບຜິດຊອບຄ່າເດີນທາງ, ກິນຢູ່ພັກເຊົາ, ຄ່າທຳນຽມ ແລະ ຄ່າແຮງງານວິຊາການຂອງພະນັກງານດັ່ງກ່າວ ຕາມລະບຽບການ 2. ຕ້ອງລາຍງານຜົນການວິໄຈ ແລະ ບົດລາຍງານເຕັກນິກ ກ່ຽວກັບ ການເກັບກຳຂໍ້ມູນແຮ່ທາດດັ່ງກ່າວ ໃຫ້ແກ່ ກົມທໍລະນີສາດ ແລະ |

| ຂໍ້ມູນພື້ນຖານ | |
|---|---|
| | ແຮ່ທາດ ແລະ ພະແນກພະລັງງານ ແລະ ບໍ່ແຮ່ແຂວງກ່ຽວຂ້ອງ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການພິຈາລະນາຄໍາຮ້ອງ ໃນການອອກໃບອະນຸຍາດ | 5 | ເມື່ອກົມທໍລະນີສາດ ແລະ ແຮ່ທາດ ໄດ້ຮັບເອກະສານຄົບຖ້ວນແລ້ວ ຈະຕ້ອງຮ່າງໜັງສື ເຖິງ ພະແນກພະລັງງານ ແລະ ບໍ່ແຮ່ ປະຈໍາແຂວງທີ່ກ່ຽວຂ້ອງ ເພື່ອຂໍຄວາມຮ່ວມມື ແລະ ອໍານວຍຄວາມສະດວກ ໃຫ້ແກ່ ການໄປເກັບກໍາຂໍ້ມູນ |
| ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ | ການເກັບກໍາຂໍ້ມູນແຮ່ທາດ ຕ້ອງຢູ່ນອກເນື້ອທີ່ທີ່ລັດຖະບານໄດ້ໃຫ້ອະນຸຍາດສໍາປະທານ ແກ່ ບໍລິສັດອື່ນ ຫລື ຢູ່ນອກເຂດໃດໜຶ່ງທີ່ທາງແຂວງ, ສູນກາງ ຫລື ກອງທັບສະຫງວນຢ່າງເປັນທາງການໄວ້ແລ້ວ | |
| ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ? | ປະຕິເສດ ກໍລະນີ ເຂດທີ່ຂໍເກັບກໍາຂໍ້ມູນແມ່ນຢູ່ພາຍໃຕ້ສໍາປະທານຂອງຜູ້ອື່ນ ຫລື ເປັນພື້ນທີ່ສະຫງວນ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| ໃບອະນຸຍາດມີກໍານົດອາຍຸ ຫລືບໍ່? | ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ? |
| ແມ່ນແລ້ວ | 1 |
| ຂັ້ນຕອນ ແລະ ເງື່ອນໄຂສໍາລັບການຕໍ່ອາຍຸໃບອະນຸຍາດ | ກໍານົດເວລາປະຕິບັດວຽກງານ ສູງສຸດບໍ່ໃຫ້ເກີນ 30 ວັນນັບແຕ່ມື້ເດີນທາງໄປ ຈົນຮອດມື້ເດີນທາງກັບ ແລະ ກໍລະນີວຽກງານບໍ່ສໍາເລັດ ແມ່ນສາມາດສະເໜີຢ່າງເປັນລາຍລັກອັກສອນຂໍຕໍ່ໄດ້ 1 ເທື່ອ ຊຶ່ງບໍ່ໃຫ້ເກີນ 15 ວັນ ບົນພື້ນຖານທີ່ຜູ້ລົງທຶນ ໄດ້ເຮັດແທ້ທໍາຈິງ |

| ຄ່າທໍານຽມ | | | | |
|---|---|---|---|---|
| ມີຄ່າທໍານຽມແບບຟອມຄໍາ ຮ້ອງ ຫລືບໍ່? | ຄ່າບໍລິການວິຊາການ | ຄ່າທໍານຽມ | ຄ່າແບບຟອມຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| ຄໍາເຫັນ | | | | |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| ມີຄ່າທໍານຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່? | ຄ່າບໍລິການວິຊາການ | ຄ່າທໍານຽມ | ຄ່າ ແບບຟອມ ຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| ຄໍາເຫັນ | | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| ຊື່ກົດລະບຽບ | ເລກທີ | ວັນທີ | ຄໍາເຫັນ |
| ກົດໝາຍວ່າດ້ວຍ ແຮ່ທາດ (ສະບັບປັບປຸງ) | 02/ສພຊ | 26.12.2011 | ມາດຕາ 30 |
| ລະບຽບ ວ່າດ້ວຍ ການເກັບກໍາຂໍ້ມູນແຮ່ທາດ | 1058/ກຊສ | 20.02.2013 | |

| ເອກະສານປະກອບ |
|---|
| ຊື່ເອກະສານ |
| ໃບສະເໜີ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2016 | | |